ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 349/ລບ
ນະຄອນຫຼວງວຽງຈັນ, ວັນທີ 13-11.2023

# ດຳລັດ
# ວ່າດ້ວຍນະໂຍບາຍ ຕໍ່ຜູ້ມີຜົນງານ ຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບງົບປະມານແຫ່ງລັດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການກວດກາລັດ ສະບັບເລກທີ 25/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ສະບັບເລກທີ 29/ສພຊ, ລົງວັນ 29 ທັນວາ 2022;
- ອີງຕາມ ໜັງສືສະເໜີຂອງກະຊວງການເງິນ ສະບັບເລກທີ 6012/ກງ, ລົງວັນທີ 03 ທັນວາ 2021.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບ ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານໃນການຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ ເພື່ອເຮັດໃຫ້ການປະຕິບັດນະໂຍບາຍດັ່ງກ່າວ ມີຄວາມເປັນເອກະພາບ, ໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ປະກອບສ່ວນໃນການຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການດັ່ງກ່າວ.

**ມາດຕາ 2 ນະໂຍບາຍຕໍ່ຜູ້ມີຜົນງານຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ**

ນະໂຍບາຍຕໍ່ຜູ້ມີຜົນງານຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ແມ່ນການຊຸກຍູ້, ສົ່ງເສີມຂອງລັດ ຕໍ່ຜູ້ມີຜົນງານໃນການຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ ດ້ວຍການປະຕິບັດນະໂຍບາຍ ເປັນເງິນບຳເນັດ ແລະ ຄ່າແຮງງານພິເສດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເງິນບຳເນັດ** ໝາຍເຖິງ ຄ່າຕອບແທນສຳລັບ ອົງການທີ່ດຳເນີນການກວດກາ, ກວດສອບ, ຄະນະກວດກາ, ຄະນະກວດສອບ ຫຼື ຄະນະສະເພາະກິດ ທີ່ມີຜົນງານ ໃນການເຄື່ອນໄຫວຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ;

2. **ຄ່າແຮງງານພິເສດ** ໝາຍເຖິງ ຄ່າຕອບແທນເປັນເງິນ ສໍາລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ມີຜົນງານ ໃນການສະໜອງຂໍ້ມູນ ຂ່າວສານ, ບອກຂ່າວ ທີ່ສາມາດແກ້ໄຂ ການລະເມີດ ກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ;

3. **ຜູ້ທີ່ມີຜົນງານ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ປະກອບສ່ວນເຂົ້າໃນການ ຕິດຕາມ, ກວດກາ, ກວດສອບ, ຊອກຫາ ແລະ ສະໜອງຂໍ້ມູນຂ່າວສານຕ່າງໆ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຊຶ່ງສາມາດເກັບພັນທະ ຫຼື ຊັບສິນຂອງລັດກັບຄືນມາໄດ້;

4. **ອົງການທີ່ດໍາເນີນການກວດກາ, ກວດສອບ** ໝາຍເຖິງ ອົງການກວດກາແຫ່ງລັດ, ອົງການ ກວດສອບແຫ່ງລັດ, ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ດໍາເນີນການກວດກາ, ກວດ ສອບ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ງົບປະມານແຫ່ງລັດ.

### ມາດຕາ 4 ຫຼັກການກ່ຽວກັບການປະຕິບັດນະໂຍບາຍ

ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ງົບປະມານແຫ່ງລັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ ແລະ ມີການຄຸ້ມຄອງຈະແຈ້ງ;
3. ຮັບປະກັນຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ, ຖືກຕ້ອງຕາມເປົ້າໝາຍທີ່ຈະໄດ້ຮັບນະໂຍ ບາຍ, ມີຄວາມໂປ່ງໃສ, ຍຸຕິທໍາ ແລະ ສາມາດກວດສອບໄດ້;
4. ມີການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງພາກສ່ວນອື່ນທີ່ກ່ຽວຂ້ອງ.

### ມາດຕາ 5 ຂອບເຂດການນໍາໃຊ້

ດໍາລັດສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ຫຼື ພົວພັນກັບ ການປະຕິບັດນະໂຍບາຍ ຕໍ່ຜູ້ມີຜົນງານ ຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ງົບປະມານແຫ່ງລັດ ຢູ່ ສປປ ລາວ.

## ໝວດທີ 2
## ການປະຕິບັດນະໂຍບາຍ

### ມາດຕາ 6 ເປົ້າໝາຍທີ່ຈະໄດ້ຮັບນະໂຍບາຍ

ເປົ້າໝາຍທີ່ຈະໄດ້ຮັບນະໂຍບາຍ ແມ່ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການ ປະຕິບັດໜ້າທີ່ ແລະ/ຫຼື ປະກອບສ່ວນຢ່າງຫ້າວຫັນເຂົ້າໃນການຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ.

ເປົ້າໝາຍທີ່ຈະໄດ້ຮັບນະໂຍບາຍມີ ດັ່ງນີ້:

1. ອົງການທີ່ດໍາເນີນການກວດກາ, ກວດສອບ;
2. ຄະນະກວດກາ, ຄະນະກວດສອບ ແລະ ຄະນະສະເພາະກິດ;
3. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ສະໜອງຂໍ້ມູນ ຂ່າວສານ ຫຼື ຜູ້ບອກຂ່າວ.

### ມາດຕາ 7 ລາຍການທີ່ໃຫ້ຫັກເປັນເງິນນະໂຍບາຍ

ລາຍການທີ່ໃຫ້ຫັກເປັນເງິນນະໂຍບາຍ ປະກອບດ້ວຍ:

1. ລາຍຮັບຈາກການປັບໃໝ ຜູ້ລະເມີດ ກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ;
2. ລາຍຮັບທີ່ເກັບກູ້ໄດ້ເພີ່ມ ຕາມຜົນການກວດກາ, ກວດສອບທີ່ໄດ້ຜ່ານການກວດກາ, ກວດສອບ ມາກ່ອນ;

3. ລາຍຮັບຈາກການຂາຍຊັບສິນທີ່ຖືກຮິບເປັນຂອງລັດ.

ລາຍຮັບ ທີ່ກ່າວມາເທິງນີ້ ຈະຫັກເປັນເງິນນະໂຍບາຍ ໄດ້ກໍຕໍ່ເມື່ອ ມີຄໍາຕັດສິນ ຫຼື ຄໍາພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ, ມີການຮັບຮອງຜົນການກວດກາ, ກວດສອບ ຂອງອົງການຈັດຕັ້ງຂັ້ນເທິງຂອງເປົ້າໝາຍທີ່ຖືກກວດກາ, ກວດສອບ, ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 8 ອັດຕາສ່ວນການຫັກເປັນເງິນນະໂຍບາຍ**

ອັດຕາສ່ວນການຫັກເປັນເງິນນະໂຍບາຍ ພາຍຫຼັງຫັກຄ່າສິ້ນເປືອງ ໃຫ້ປະຕິບັດຕາມແຕ່ລະກໍລະນີດັ່ງນີ້:

1. ລາຍຮັບຈາກການປັບໃໝ ໃຫ້ຫັກ ສີ່ສິບສ່ວນຮ້ອຍ (40%) ເປັນເງິນນະໂຍບາຍ, ສ່ວນເຫຼືອຫົກສິບສ່ວນຮ້ອຍ (60%) ໃຫ້ມອບເຂົ້າງົບປະມານແຫ່ງລັດຕາມລະບຽບການ;

2. ລາຍຮັບ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 2 ແລະ ຂໍ້ 3 ມາດຕາ 7 ຂອງດໍາລັດສະບັບນີ້ ໃຫ້ຫັກ ສາມສິບສ່ວນຮ້ອຍ (30%) ເປັນເງິນນະໂຍບາຍ ແຕ່ສູງສຸດບໍ່ໃຫ້ເກີນ 1.000.000.000 ກີບ (ໜຶ່ງຕື້ກີບ), ສ່ວນເຫຼືອນັ້ນໃຫ້ມອບເຂົ້າງົບປະມານແຫ່ງລັດຕາມລະບຽບການ.

**ມາດຕາ 9 ການຫັກຄ່າສິ້ນເປືອງ**

ຄ່າສິ້ນເປືອງ ທີ່ໃຫ້ຫັກ ມີ ດັ່ງນີ້:

1. ຄ່າທົດສອບຄຸນນະພາບ;
2. ຄ່າຈ້າງຊ່ຽວຊານ, ທີ່ປຶກສາ ແລະ ຄ່າແປພາສາ;
3. ຄ່າຈັດການປະມູນ;
4. ຄ່າຂົນສົ່ງ, ຄ່າຝາກສາງ, ຍົກຍໍ, ແບກຫາບ, ຫຸ້ມຫໍ່, ຄ່ຽນຖ່າຍ;
5. ຄ່າປົກປັກຮັກສາຊັບສິນທີ່ຖືກອາຍັດ ຫຼື ຍຶດ;
6. ຄ່າໃຊ້ອື່ນທີ່ຈໍາເປັນ.

**ມາດຕາ 10 ການຄິດໄລ່ເງິນນະໂຍບາຍ ໃຫ້ຜູ້ທີ່ມີຜົນງານ**

ການຄິດໄລ່ເງິນນະໂຍບາຍ ໃຫ້ເອົາຈໍານວນເງິນທີ່ຫັກເປັນເງິນນະໂຍບາຍ ຈໍານວນສີ່ສິບສ່ວນຮ້ອຍ (40%), ສາມສິບສ່ວນຮ້ອຍ (30%) ທີ່ໄດ້ກໍານົດໄວ້ໃນມາດຕາ 8 ຂອງດໍາລັດສະບັບນີ້ ມາຄິດໄລ່ເປັນຮ້ອຍສ່ວນຮ້ອຍ (100%) ແລ້ວໃຫ້ແບ່ງປັນດັ່ງນີ້:

1. ອົງການທີ່ດໍາເນີນການກວດກາ, ກວດສອບ ຫ້າສິບຫ້າສ່ວນຮ້ອຍ (55%) ເພື່ອບູລະນະກົງຈັກການຈັດຕັ້ງ;

2. ຄະນະກວດກາ, ຄະນະກວດສອບ ຫຼື ຄະນະສະເພາະກິດ ສາມສິບຫ້າສ່ວນຮ້ອຍ (35%);

3. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ສະໜອງຂໍ້ມູນຂ່າວສານ ຫຼື ຜູ້ບອກຂ່າວ ສິບສ່ວນຮ້ອຍ (10%).

ໃນກໍລະນີ ບໍ່ມີ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ສະໜອງຂໍ້ມູນ ຂ່າວສານ ຫຼື ຜູ້ບອກຂ່າວ ໃຫ້ເອົາ ສິບສ່ວນຮ້ອຍ (10%) ມອບເຂົ້າງົບປະມານແຫ່ງລັດ.

**ມາດຕາ 11 ການນໍາໃຊ້ເງິນ ບູລະນະກົງຈັກການຈັດຕັ້ງ**

ເງິນບູລະນະການຈັດຕັ້ງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງດໍາລັດສະບັບນີ້ ໃຫ້ນໍາໃຊ້ເຂົ້າໃນການສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານກວດກາ, ກວດສອບ ເພື່ອເຄື່ອນໄຫວຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ.

## ໝວດທີ 3
## ການຈັດຕັ້ງຮັບຜິດຊອບ, ການຄຸ້ມຄອງ ແລະ ນຳໃຊ້ເງິນນະໂຍບາຍ

**ມາດຕາ 12 ອົງການຈັດຕັ້ງທີ່ຮັບຜິດຊອບປະຕິບັດນະໂຍບາຍ**

ອົງການຈັດຕັ້ງຮັບຜິດຊອບປະຕິບັດນະໂຍບາຍ ແມ່ນອົງການທີ່ດຳເນີນການ ກວດກາ, ກວດສອບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 13 ການຄຸ້ມຄອງ ແລະ ການນຳໃຊ້ເງິນນະໂຍບາຍ**

ການຄຸ້ມຄອງ ແລະ ການນຳໃຊ້ເງິນນະໂຍບາຍ ໃຫ້ປະຕິບັດ ດັ່ງນີ້:

1. ການເປີດບັນຊີເງິນຝາກ;
2. ການຈົດເປັນລາຍຮັບ;
3. ການສ້າງແຜນ;
4. ການຂໍອະນຸຍາດເບີກຈ່າຍ;
5. ການເບີກຈ່າຍ;
6. ການສະຫຼຸບລາຍງານ.

**ມາດຕາ 14 ການເປີດບັນຊີເງິນຝາກ**

ອົງການຈັດຕັ້ງຮັບຜິດຊອບປະຕິບັດນະໂຍບາຍ ຕ້ອງເປີດບັນຊີເງິນຝາກສຳລັບເງິນນະໂຍບາຍ ຢູ່ໃນລະບົບຄັງເງິນແຫ່ງຊາດ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 15 ການຈົດເປັນລາຍຮັບ**

ພາຍຫຼັງທີ່ໄດ້ເປີດບັນຊີເງິນຝາກສຳລັບເງິນນະໂຍບາຍ ໃຫ້ອົງການຈັດຕັ້ງຮັບຜິດຊອບຈົດເປັນລາຍຮັບ ເພື່ອຄຸ້ມຄອງ, ຕິດຕາມກວດກາ ແລະ ນຳໃຊ້ເງິນນະໂຍບາຍ.

**ມາດຕາ 16 ການສ້າງແຜນ**

ອົງການຈັດຕັ້ງຮັບຜິດຊອບປະຕິບັດນະໂຍບາຍ ຕ້ອງສ້າງແຜນນຳໃຊ້ເງິນນະໂຍບາຍ ບົນພື້ນຖານການຫັກຄ່າສິ້ນເປືອງ, ການຄິດໄລ່ເງິນນະໂຍບາຍໃຫ້ຜູ້ມີຜົນງານ ແລະ ການນຳໃຊ້ເງິນບູລະນະກົງຈັກການຈັດຕັ້ງ ຕາມທີ່ໄດ້ກຳນົດໃນດຳລັດສະບັບນີ້.

**ມາດຕາ 17 ການຂໍອະນຸຍາດເບີກຈ່າຍ**

ການຂໍອະນຸຍາດເບີກຈ່າຍເງິນນະໂຍບາຍ ໃຫ້ອົງການຈັດຕັ້ງຮັບຜິດຊອບ ປະກອບເອກະສານຂໍອະນຸຍາດເບີກຈ່າຍ ຕາມແຜນນຳໃຊ້ເງິນນະໂຍບາຍ ແລ້ວນຳສະເໜີຫົວໜ້າອົງການ ດຳເນີນການກວດກາ, ກວດສອບພິຈາລະນາ ເພື່ອສະເໜີຄັງເງິນແຫ່ງຊາດທີ່ກ່ຽວຂ້ອງພິຈາລະນາເບີກຈ່າຍ ຕາມແຕ່ກໍລະນີ;

**ມາດຕາ 18 ການເບີກຈ່າຍ**

ລັດຖະມົນຕີ, ປະທານ ຫຼື ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ ຫຼື ເຈົ້ານະຄອນ ເປັນຜູ້ພິຈາລະນາອະນຸມັດເບີກຈ່າຍເງິນນະໂຍບາຍ ໃຫ້ຜູ້ມີຜົນງານ ຕາມແຕ່ລະກໍລະນີ.

**ມາດຕາ 19 ການສະຫຼຸບລາຍງານ**

ອົງການກວດກາ, ກວດສອບ ຕ້ອງສະຫຼຸບລາຍງານລາຍຮັບ-ລາຍຈ່າຍ ກ່ຽວກັບການປະຕິບັດ ນະໂຍບາຍໃຫ້ຜູ້ມີຜົນງານ ຊຶ່ງຕ້ອງສະຫຼຸບລາຍງານ ແຕ່ລະເດືອນ, ງວດ ແລະ ປີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ໂດຍມີການເຊັນຢັ້ງຢືນຈາກຜູ້ສັ່ງການ, ຫົວໜ້າຄັງເງິນແຫ່ງຊາດແຕ່ລະຂັ້ນ ແລ້ວສົ່ງໃຫ້ ກະຊວງການເງິນ ສຳລັບຂັ້ນສູນກາງ, ພະແນກການເງິນ ແຂວງ, ນະຄອນຫຼວງ ແລະ ຫ້ອງການການເງິນ ເມືອງ, ເທດສະບານ, ນະຄອນ ສຳລັບຂັ້ນທ້ອງຖິ່ນ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 20 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດທຸກຮູບການ ເພື່ອຫາຜົນປະໂຫຍດ ສ່ວນຕົວ, ຄອບຄົວ ຍາດພີ່ນ້ອງ ຫຼື ພັກພວກ;

2. ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ ກ່ຽວກັບການປະຕິບັດນະໂຍບາຍ;

3. ແຊກແຊງ, ກ້າວກ່າຍ, ຂັດຂວາງ, ໃສ່ຮ້າຍປ້າຍສີ ຫຼື ບໍ່ໃຫ້ການຮ່ວມມືແກ່ ອົງການຈັດຕັ້ງທີ່ຮັບຜິດຊອບການປະຕິບັດນະໂຍບາຍ;

4. ສ້າງຂໍ້ມູນ ຂ່າວສານ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ບອກຂ່າວທີ່ເປັນການ ບິດເບືອນຂໍ້ມູນຂ່າວສານ ເພື່ອໃຫ້ຕົນໄດ້ຮັບເງິນນະໂຍບາຍ;

5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 21 ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕຳແໜ່ງ ຕົກລົງ, ປອມແປງເອກະສານ ຫຼື ຢັ້ງຢືນເອກະສານທີ່ຂັດກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ສົມຮູ້ຮ່ວມຄິດ, ປົກປິດ, ເຊື່ອງອຳ ຂໍ້ມູນ, ຫຼັກຖານ ຫຼື ບິດລາຍງານກ່ຽວກັບເງິນນະໂຍບາຍໃຫ້ຜູ້ມີຜົນງານ;

3. ກົດໜ່ວງ ຖ່ວງດຶງ ເອກະສານກ່ຽວກັບການຂໍອະນຸຍາດເບີກຈ່າຍ ແລະ ການເບີກຈ່າຍ ເງິນນະໂຍບາຍ;

4. ຂໍເອົາ, ທວງເອົາ, ຮັບເອົາ ຫຼື ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນກ່ຽວກັບການປະຕິບັດນະໂຍບາຍ;

5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 22 ຂໍ້ຫ້າມສຳລັບ ອົງການຈັດຕັ້ງທີ່ຮັບຜິດຊອບປະຕິບັດນະໂຍບາຍ**

ຫ້າມອົງການຈັດຕັ້ງທີ່ຮັບຜິດຊອບປະຕິບັດນະໂຍບາຍ ມີພຶດຕິກຳ ດັ່ງນີ້:

1. ເປີດບັນຊີເງິນຝາກສະເພາະ ນອກລະບົບຄັງເງິນແຫ່ງຊາດ;

2. ສ້າງຄວາມຫຍຸ້ງຍາກ, ກົດໜ່ວງ ຖ່ວງດຶງ, ແກ່ຍາວເວລາໃນການຄົ້ນຄວ້າ ແລະ ແກ້ໄຂເອກະສານກ່ຽວກັບການປະຕິບັດນະໂຍບາຍ;

3. ເປີດເຜີຍຄວາມລັບ, ຂໍ້ມູນກ່ຽວກັບຜົນກວດກາ, ກວດສອບ ແລະ ການໄດ້ຮັບນະໂຍບາຍ ໂດຍບໍ່ໄດ້ຮັບອະນຸຍາດ;

4. ແບ່ງປັນ, ແຈກຢາຍ ເງິນນະໂຍບາຍ ໂດຍບໍ່ຖືກຕ້ອງ ຫຼື ບໍ່ຖືກເປົ້າໝາຍ ລວມທັງການ ນຳເອົາເງິນນະໂຍບາຍ ໄປໃຊ້ຈ່າຍໂດຍບໍ່ໄດ້ຮັບອະນຸຍາດ;

5. ຄິດໄລ່ອັດຕາສ່ວນການຫັກເປັນເງິນນະໂຍບາຍ ສູງກວ່າອັດຕາສ່ວນທີ່ໄດ້ກຳນົດໄວ້ດຳລັດສະບັບນີ້;

6. ນຳເອົາເງິນນະໂຍບາຍ ໄປແບ່ງປັນໃຫ້ຜູ້ທີ່ບໍ່ມີຜົນງານ ຫຼື ນຳໃຊ້ເງິນຮ່ວງອື່ນ ເຂົ້າໃນການປະຕິບັດນະໂຍບາຍ;

7. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ການກວດກາການປະຕິບັດນະໂຍບາຍ

### ມາດຕາ 23 ອົງການກວດກາ

ອົງການກວດກາ ການປະຕິບັດນະໂຍບາຍ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນກະຊວງການເງິນ, ພະແນກການເງິນແຂວງ, ນະຄອນຫຼວງ, ຫ້ອງການການເງິນເມືອງ, ເທດສະບານ, ນະຄອນ;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດສອບປະຈຳພາກ ແລະ ອົງການກວດກາແຫ່ງລັດແຕ່ລະຂັ້ນ.

### ມາດຕາ 24 ເນື້ອໃນການກວດກາ

ການກວດກາມີເນື້ອໃນ ດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ໂຄງການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ກ່ຽວກັບການປະຕິບັດນະໂຍບາຍ;

2. ການປະຕິບັດວຽກງານດ້ານວິຊາສະເພາະ, ເຕັກນິກ, ຫຼັກການຄຸ້ມຄອງເງິນນະໂຍບາຍ;

3. ເນື້ອໃນອື່ນທີ່ເຫັນວ່າ ມີຄວາມຈຳເປັນ.

### ມາດຕາ 25 ຮູບການກວດກາ

ຮູບການກວດກາມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມແຜນປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

ໃນການດຳເນີນການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 26 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຂອງລັດ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 28 ການຈັດຕັ້ງປະຕິບັດ**

ກະຊວງການເງິນ ເປັນເຈົ້າການອອກບົດແນະນຳໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 29 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 26 ທັນວາ 2023 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສອນໄຊ ສີພັນດອນ